# ປົກປ້ອງລູກນ້ອຍ ຂອງທ່ານຕະຫຼອດຊີວິດ

ເມື່ອຜູ້ຍິງຖືພາເປັນພະຍາດຕັບອັກເສບ ບີ...



## ເປັນຫຍັງຜູ້ຍິງຖືພາຄວນເປັນຫ່ວງກ່ຽວກັບພະຍາດຕັບອັກເສບ ບີ?

ພະຍາດຕັບອັກເສບ ບີ ແມ່ນພະຍາດຕັບທີ່ຮ້າຍແຮງ ຊຶ່ງສາມາດແຜ່ລາມໄປຫາຜູ້ອື່ນໆໄດ້. ມັນຈຶ່ງສຳຄັນສຳລັບຜູ້ຍິງທີ່ຈະຊອກເບິ່ງວ່າ ຕົນເອງເປັນພະຍາດຕັບອັກເສບ ບີ ຫຼືບໍ່, ເພື່ອຈະໄດ້ໄປຮັບການປິ່ນປົວ. ນອກຈາກນີ້ ມັນເປັນໄປໄດ້ສຳລັບຜູ້ຍິງຖືພາທີ່ເປັນພະຍາດຕັບອັກເສບ ບີ ທີ່ຈະແຜ່ລາມເຊື້ອໄວຣັສໄປຫາລູກນ້ອຍຂອງລາວໃນເວລາເກີດລູກໄດ້. ໂຊກດີ, ມີວັກຊີນທີ່ສາມາດປ້ອງກັນເດັກນ້ອຍເກີດໃໝ່ຈາກການຕິດເຊື້ອພະຍາດຕັບອັກເສບ ບີໄດ້.

## ພະຍາດຕັບອັກເສບ ບີ ແມ່ນຫຍັງ?

"ຕັບອັກເສບ" ໝາຍເຖິງ ການອັກເສບຂອງຕັບ. ຕັບອັກເສບ ບີ ແມ່ນພະຍາດຕິດຕໍ່ຊຶ່ງເປັນຜົນຈາກການຕິດເຊື້ອໄວຣັສ ຕັບອັກເສບ ບີ. ເມື່ອບຸກຄົນໜຶ່ງຕິດເຊື້ອ, ໄວຣັສຕັບອັກເສບ ບີ ສາມາດຢູ່ໃນຮ່າງກາຍຂອງບຸກຄົນນັ້ນໄດ້ຕະຫຼອດຊີວິດ ແລະເປັນສາເຫດໃຫ້ເກີດບັນຫາຕັບຢ່າງຮ້າຍແຮງໄດ້.

## ພະຍາດຕັບອັກເສບ ບີ ສາມາດແຜ່ລາມໄປເຖິງເດັກເກີດໃໝ່ ໄດ້ບໍ່?

ໄດ້. ໄວຣັສພະຍາດຕັບອັກເສບ ບີ ສາມາດແຜ່ລາມໄປເຖິງເດັກເກີດໃໝ່ໄດ້ໃນລະຫວ່າງເດັກເກີດ. ອັນນີ້ສາມາດເກີດຂຶ້ນໄດ້ໃນລະຫວ່າງຄອດລູກ ຫຼື ຜ່າຕັດເອົາລູກອອກ.

## ພະຍາດຕັບອັກເສບ ບີ ແຜ່ລາມແນວໃດອີກ?

ນອກຈາກນີ້ ພະຍາດຕັບອັກເສບ ບີ ຍັງແຜ່ລາມເມື່ອເລືອດ, ນ້ຳອະສຸຈິ, ຫຼື ຂອງແຫຼວໃນຮ່າງກາຍອື່ນໆ ຈາກບຸກຄົນໜຶ່ງຊຶ່ງມີເຊື້ອໄວຣັສເຂົ້າສູ່ຮ່າງກາຍຂອງອີກຄົນໜຶ່ງທີ່ບໍ່ໄດ້ຕິດເຊື້ອ. ໄວຣັສສາມາດຕິດຕໍ່ໄດ້ຫຼາຍ ແລະ ຜ່ານບາດແຜເທິງຜິວໜັງໄດ້ຢ່າງງ່າຍດາຍ ຫຼື ຜ່ານເນື້ອເຍື່ອນຸ້ມ ເຊັ່ນ ດັງ, ປາກ, ແລະ ຕາ.

ສິ່ງນີ້ສາມາດເກີດຂຶ້ນໄດ້ ຜ່ານການສຳຜັດໂດຍກົງກັບເລືອດຈາກຜູ້ທີ່ມີເຊື້ອພະຍາດ, ເຖິງແມ່ນວ່າໃນຈຳນວນໜ້ອຍ ເກີນກວ່າທີ່ຈະເຫັນດ້ວຍຕາກໍຕາມ. ນອກຈາກນີ້ ພະຍາດຕັບອັກເສບ ບີ ຍັງສາມາດແຜ່ລາມຜ່ານການມີເພດສຳພັນ ກັບບຸກຄົນທີ່ຕິດເຊື້ອພະຍາດ.

> CDC (ສູນຄວບຄຸມ ແລະ ປ້ອງກັນພະຍາດຕິດຕໍ່) ແນະນຳວ່າ ເດັກເກີດໃໝ່ຄວນຮັບຢາສັກ HBIG ແລະຮັບການສັກວັກຊີນພະຍາດຕັບອັກເສບ ບີ ເທື່ອທຳອິດໄດ້ພາຍໃນ 12 ຊົ່ວໂມງຫຼັງຈາກເກີດ.

## ພະຍາດຕັບອັກເສບ ບີ ຮ້າຍແຮງ ແນວໃດ?

ເມື່ອເດັກເກີດໃໝ່ຕິດເຊື້ອພະຍາດຕັບອັກເສບ ບີ, ເຂົາເຈົ້າມີໂອກາດ 90% ທີ່ຈະພັດທະນາກາຍເປັນການຕິດເຊື້ອ ພະຍາດຊຳເຮື້ອຕະຫຼອດຊີວິດ. ມີຄົນຕິດເຊື້ອຫຼາຍເທົ່າກັບ 1 ໃນ 4 ທີ່ເປັນພະຍາດຕັບອັກເສບ ບີ ຊຳເຮື້ອ ຊຶ່ງເຮັດໃຫ້ມີບັນຫາສຸຂະພາບຮ້າຍແຮງ. ພະຍາດຕັບອັກເສບ ບີ ສາມາດທຳລາຍຕັບ, ເຮັດໃຫ້ເປັນພະຍາດຕັບ, ແລະມະເຮັງຕັບ.

## ມີຄົນເປັນພະຍາດຕັບອັກເສບ ບີ ຫຼາຍປານໃດ?

ປະມານ 350 ລ້ານຄົນທົ່ວໂລກ ແລະ 1.2 ລ້ານຄົນໃນສະຫະລັດອາເມຣິກາ ທີ່ຕິດເຊື້ອພະຍາດຕັບອັກເສບ ບີ.



## ທ່ານໜໍສາມາດປ້ອງກັນເດັກເກີດໃໝ່ຈາກການຕິດເຊື້ອພະຍາດຕັບອັກເສບ ບີ ໄດ້ບໍ່?

ໄດ້. ເດັກທີ່ເກີດຈາກຜູ້ຍິງທີ່ເປັນພະຍາດຕັບອັກເສບ ບີ ຕ້ອງຮັບການສັກຢາປ້ອງກັນພະຍາດໄດ້ທັນທີຫຼັງຈາກເກີດ. ການສັກວັກຊີນເທື່ອທຳອິດແມ່ນວັກຊີນພະຍາດຕັບອັກເສບ ບີ ແລະອີກເທື່ອໜຶ່ງແມ່ນສັກວັກຊີນທີ່ມີຊື່ວ່າ HBIG. ການສັກວັກຊີນທັງສອງເທື່ອຊ່ວຍປ້ອງກັນເດັກເກີດໃໝ່ຈາກການຕິດເຊື້ອພະຍາດຕັບອັກເສບ ບີ. ຢາສັກປ້ອງກັນພະຍາດເຮັດວຽກໄດ້ດີທີ່ສຸດ ເມື່ອສັກພາຍໃນ 12 ຊົ່ວໂມງຫຼັງຈາກເກີດ.

## HBIG ແມ່ນຫຍັງ?

HBIG ແມ່ນຢາຊຶ່ງຊ່ວຍ "ກະຕຸ້ນ" ຮ່າງກາຍຂອງເດັກເກີດໃຫມ່ ຫຼື ຊ່ວຍພິເສດໃຫ້ຮ່າງກາຍສາມາດຕໍ່ສູ້ກັບໄວຣັສໄດ້ ທັນທີທີ່ເດັກເກີດ. ຢາສັກ HBIG ໃຫ້ສະເພາະເດັກເກີດໃໝ່ທີ່ເກີດຈາກແມ່ທີ່ມີເຊື້ອພະຍາດຕັບອັກເສບ ບີ ເທົ່ານັ້ນ.



## ຂ້າພະເຈົ້າສາມາດແນ່ໃຈໄດ້ແນວໃດວ່າ ຄອບຄົວຂອງຂ້າພະເຈົ້າໄດ້ຮັບການປົກປ້ອງຈາກພະຍາດຕັບອັກເສບ ບີ?

### ໃຫ້ທຸກຄົນໄປຮັບການກວດຫາ ພະຍາດຕັບອັກເສບ ບີ

ພໍ່ຂອງລູກນ້ອຍຂອງທ່ານ ແລະຄົນອື່ນໆ ທີ່ອາໄສຢູ່ໃນເຮືອນຂອງທ່ານ ຄວນໄປຫາທ່ານໝໍ ຫຼື ຄລີນິກເພື່ອກວດກາ. ການກວດ ສະມາຊິກໃນຄອບຄົວຂອງທ່ານ ຊ່ວຍບອກ ໄດ້ວ່າ ເຂົາເຈົ້າເປັນພະຍາດຕັບອັກເສບ ບີ ຫຼືບໍ່. ຖ້າຫາກ ເຂົາເຈົ້າບໍ່ມີເຊື້ອພະຍາດ ຕັບອັກເສບ ບີ, ທ່ານໝໍກໍຈະລົມກັບເຂົາເຈົ້າກ່ຽວກັບການສັກວັກຊິນພະຍາດ ຕັບອັກເສບ ບີ ເພື່ອປົກປ້ອງເຂົາເຈົ້າຈາກການຕິດເຊື້ອພະຍາດດັ່ງກ່າວ.

### ຫຸ້ມບາດ ແລະ ບາດແຜ

ເນື່ອງຈາກພະຍາດຕັບອັກເສບ ບີ ແຜ່ລາມຜ່ານທາງເລືອດ, ຄົນທີ່ມີເຊື້ອພະຍາດ ຕັບອັກເສບ ບີ ຄວນລະມັດລະວັງທີ່ຈະບໍ່ແຜ່ຂະຫຍາຍເຊື້ອພະຍາດ ໄປຫາຜູ້ອື່ນທີ່ອາດຕິດເຊື້ອຜ່ານທາງເລືອດ. ມັນຈຶ່ງສຳຄັນທີ່ຈະບໍ່ຄວນໃຊ້ເຄື່ອງຂອງສ່ວນຕົວນຳກັນ ເຊັ່ນ ມີດແຖ, ມີດຕັດເລັບ, ແປງຖູແຂ້ວ, ຫຼື ເຄື່ອງກວດນ້ຳຕານໃນເລືອດ. ຄວນຫຸ້ມ ບາດ ແລະ ບາດແຜໄວ້ໃນຂະນະທີ່ກຳລັງຮັກສາ.

### ຢ່າຫຍ້ຳອາຫານໃຫ້ລູກກິນ

ຈຳນວນເລືອດພຽງເລັກນ້ອຍບາງເທື່ອກໍສາມາດຢູ່ໃນປາກຂອງຄົນໄດ້. ຢ່າຫຍ້ຳອາຫານໃຫ້ລູກກິນ.

Publication No. 22-0438

## ເດັກນ້ອຍເກີດໃໝ່ຈຳຕ້ອງໄດ້ສັກຢາປ້ອງກັນພະຍາດຕັບອັກເສບ ບີ ຈັກເທື່ອ?

ລູກນ້ອຍຂອງທ່ານຈະໄດ້ຮັບວັກຊີນ 3-4 ເທື່ອ, ຂຶ້ນກັບຍີ່ຫໍ້ຂອງວັກຊີນທີ່ນຳໃຊ້ນັ້ນ. ຫຼັງຈາກການສັກເທື່ອທຳອິດ ໃນໂຮງໝໍ, ການສັກວັກຊີນເທື່ອຕໍ່ໄປຕ້ອງໄດ້ໃຫ້ໃນເວລາອາຍຸໄດ້ 1-2 ເດືອນ. ໂດຍທົ່ວໄປ ການສັກວັກຊີນເທື່ອສຸດທ້າຍແມ່ນສັກໃຫ້ໃນເວລາທີ່ລູກຂອງທ່ານອາຍຸໄດ້ໜຶ່ງປີ. ຈົ່ງຖາມທ່ານໝໍຂອງທ່ານ ຫຼື ພະຍາບານ ວ່າເມື່ອໃດ ທີ່ລູກຂອງທ່ານຄວນກັບຄືນມາຮັບການສັກວັກຊີນແຕ່ລະເທື່ອ.

## ລູກນ້ອຍຂອງຂ້າພະເຈົ້າຈຳຕ້ອງໄດ້ສັກຢາ ທັງໝົດບໍ?

ຢາສັກປ້ອງກັນພະຍາດຕັບອັກເສບ ບີ ທັງໝົດ ແມ່ນຈຳເປັນເພື່ອຊ່ວຍຮັກສາໃຫ້ລູກຂອງທ່ານປອດໄພຈາກການຕິດ ເຊື້ອພະຍາດຕັບອັກເສບ ບີ.

**ປ້ອງກັນພະຍາດຕັບອັກເສບ ບີ.**
**ພາລູກນ້ອຍຂອງທ່ານໄປສັກວັກຊີນ.**

## ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າ ລູກຂອງຂ້າພະເຈົ້າໄດ້ຮັບການປ້ອງກັນ?

ຫຼັງຈາກສັກຢາປ້ອງກັນພະຍາດຕັບອັກເສບ ບີ ທັງໝົດແລ້ວ, ທ່ານໝໍຂອງທ່ານຈະກວດເລືອດຂອງລູກນ້ອຍຂອງທ່ານ. ການກວດເລືອດຈະບອກທ່ານ ແລະ ໝໍຂອງທ່ານວ່າ ລູກຂອງທ່ານໄດ້ຮັບການປົກປ້ອງ ແລະບໍ່ມີເຊື້ອພະຍາດຕັບອັກເສບ ບີ. ໂດຍທົ່ວໄປ ການກວດເລືອດແມ່ນເຮັດໃນ 1-2 ເດືອນ ຫຼັງຈາກການສັກວັກຊີນເທື່ອສຸດທ້າຍ. ໃຫ້ແນ່ໃຈວ່າໃຫ້ພາລູກຂອງທ່ານກັບຄືນໄປຫາທ່ານໝໍເພື່ອຮັບການກວດເລືອດທີ່ສຳຄັນນີ້.

## ພະຍາດຕັບອັກເສບ ບີ ບໍ່ແຜ່ລາມໂດຍ:



### ການລ້ຽງລູກດ້ວຍນົມແມ່

ມັນປອດໄພທີ່ຈະລ້ຽງລູກຂອງທ່ານດ້ວຍນ້ຳນົມຂອງທ່ານເອງ. ທ່ານບໍ່ສາມາດ ແຜ່ຂະຫຍາຍເຊື້ອພະຍາດຕັບອັກເສບ ບີ ໄປສູ່ລູກນ້ອຍຂອງທ່ານໄດ້ໂດຍການລ້ຽງລູກດ້ວຍນົມແມ່.

### ການຄົວກິນ ແລະ ການກິນ

ມັນປອດໄພທີ່ຈະຕຽມອາຫານແລະກິນອາຫານຮ່ວມກັບຄອບຄົວຂອງທ່ານ. ພະຍາດຕັບອັກເສບ ບີ ບໍ່ແຜ່ຂະຫຍາຍໂດຍການໃຊ້ຈານ, ພາຊະນະຄົວກິນ ຫຼືຈອກ.

### ການກອດ ແລະການຈູບ

ທ່ານສາມາດກອດ ແລະຈູບລູກຂອງທ່ານ, ສະມາຊິກໃນຄອບຄົວ, ຫຼື ຜູ້ອື່ນໆ ທີ່ໃກ້ຊິດກັບທ່ານໄດ້. ທ່ານບໍ່ສາມາດແຜ່ຂະຫຍາຍເຊື້ອພະຍາດຕັບອັກເສບ ບີ ດ້ວຍການກອດ ແລະຈູບເຂົາເຈົ້າໄດ້. ນອກຈາກນີ້, ພະຍາດຕັບອັກເສບ ບີ ບໍ່ສາມາດແຜ່ຂະຫຍາຍຜ່ານການຈາມ ຫຼື ໄອ ໄດ້.

## ສຳລັບຂໍ້ມູນເພີ່ມເຕີມ

ປຶກສາກັບເຈົ້າໜ້າທີ່ດູແລສຸຂະພາບຂອງທ່ານ, ໂທໄປທີ່ກົມສຸຂະພາບ, ຫຼື ໄປທີ່ www.cdc.gov/hepatitis*

*ມີເອກະສານໃຫ້ແບບຈຳກັດເປັນພາສາລາວ.

DEPARTMENT OF HEALTH & HUMAN SERVICES
Centers for Disease Control and Prevention
*Division of Viral Hepatitis*

www.cdc.gov/hepatitis

July 2010